**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ນາຍົກລັດຖະມົນຕີ

ກະຊວງໂຍທາທິການ ແລະ ຂົນສົ່ງ
ເລກທີ: 671
ວັນທີ: 27-4-12

ເລກທີ 202/ນຍ

ນະຄອນຫຼວງວຽງຈັນ, ວັນທີ 25 ເມສາ 2012.

# ດຳລັດ

## ວ່າດ້ວຍການແຕ່ງຕັ້ງຮອງປະທານ ແລະ ຄະນະກຳມະການສະພາບໍລິຫານ ອົງການປະກັນສັງຄົມພາກວິສາຫະກິດ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ ສະບັບເລກທີ 138/ນຍ, ລົງວັນທີ 14 ພຶດສະພາ 2007;
- ອີງຕາມ ໜັງສືສະເໜີຂອງລັດຖະມົນຕີວ່າການກະຊວງແຮງງານ ແລະ ສະຫວັດດີການສັງຄົມ ສະບັບເລກທີ 1223/ຮສສ, ລົງວັນທີ 5 ມີນາ 2012;
- ອີງຕາມໜັງສືສະເໜີຂອງກະຊວງພາຍໃນສະບັບເລກທີ ..........................

## ນາຍົກລັດຖະມົນຕີ ອອກດຳລັດ:

ມາດຕາ 1. ແຕ່ງຕັ້ງຜູ້ທີ່ມີລາຍຊື່ລຸ່ມນີ້ເປັນຮອງປະທານ ແລະ ຄະນະກຳມະການສະພາບໍລິຫານອົງການປະກັນສັງຄົມພາກວິສາຫະກິດ (ອປສ) ລາຍລະອຽດດັ່ງນີ້:

1. ທ່ານ ສີມູນ ອຸ່ນລາສີ ຮອງປະທານສູນກາງສະຫະພັນກຳມະບານລາວ ເປັນຮອງປະທານສະພາບໍລິຫານອົງການປະກັນສັງຄົມ ພາກວິສາຫະກິດ ປ່ຽນແທນທ່ານ ທອງຈັນ ພອນຄຳມາ ຮອງປະທານສະພາບໍລິຫານອົງການປະກັນສັງຄົມ ພາກວິສາຫະກິດ; (ອປສ) ຕາມດຳລັດເລກທີ 126/ນຍ ລົງວັນທີ 11 ພຶດສະພາ 2009;

2. ທ່ານ ອຸ່ນຄຳ ບຸນຍະແສງ ຫົວໜ້າກົມປົກປ້ອງແຮງງານ ສູນກາງສະຫະພັນກຳມະບານລາວ ເພີ່ມ ເປັນຄະນະກຳມະການ ສະພາບໍລິຫານອົງການປະກັນສັງຄົມ ພາກວິສາຫະກິດ; (ອປສ) ຕາມດຳລັດເລກທີ 126/ນຍ ລົງວັນທີ 11 ພຶດສະພາ 2009.

ມາດຕາ 2. ຫ້ອງວ່າການລັດຖະບານ, ບັນດາກະຊວງ, ອົງການທຽບເທົ່າກະຊວງ, ສະພາບໍລິຫານອົງການປະກັນສັງຄົມພາກວິສາຫະກິດ, ບັນດາອົງການຈັດຕັ້ງຕ່າງໆ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງພ້ອມດ້ວຍຜູ້ທີ່ໄດ້ຮັບການແຕ່ງຕັ້ງຈົ່ງຮັບຮູ້ ແລະ ປະຕິບັດຕາມດໍາລັດສະບັບນີ້ ໃຫ້ໄດ້ຮັບຜົນດີ.

ມາດຕາ 3. ດໍາລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນາຍົກລັດຖະມົນຕີ

ທອງສິງ ທໍາມະວົງ